**ການສະແດງຄວາມຄິດເຫັນ**
ພວກເຮົາຕ້ອງການໃຫ້ທ່ານສະແດງຄວາມຄິດເຫັນ ຖ້າທ່ານມີຄວາມກັງວົນ ຫຼື ສົງໄສວ່າມີການລະເມີດກົດໝາຍ, ກົດການ ປະພຶດຂອງພວກເຮົາ ຫຼື ກົດຈັນຍາບັນຂອງຜູ້ຈັດຈຳໜ່າຍ.

ພວກເຮົາສົ່ງເສີມຄວາມກົງໄປກົງມາ ແລະ ຈະສະໜັບສະໜູນຜູ້ທີ່ສະແດງຄວາມກັງວົນ ເຖິງແມ່ນວ່າຄວາມກັງວົນນັ້ນ ຈະກາຍ ເປັນເລື່ອງທີ່ຜິດພາດກໍ່ຕາມ. ຢ່າງໃດກໍ່ຕາມ, ການສະແດງຄວາມກັງວົນໂດຍທີ່ມີເຈດຕະນາຮ້າຍອາດນໍາໄປສູ່ການລົງໂທດທາງ ວິໄນໄດ້.

ກົດການປະພຶດ ແລະ ກົດຈັນຍາບັນຂອງຜູ້ຈັດຈຳໜ່າຍຂອງພວກເຮົາ ແມ່ນມີຢູ່ໃນເຄືອຂ່າຍພາຍໃນອົງການ ແລະ ຢູ່ທີ່: www.imperialbrandsplc.com. ທ່ານສາມາດສົ່ງອີເມວສອບຖາມທີ່ Governance.Team@impbrands.com

**ທ່ານສາມາດສະແດງຄວາມຄິດເຫັນໃນຫຼາຍວິທີທາງ:**

**1. ການສະແດງຄວາມຄິດເຫັນພາຍໃນ**
ຖ້າທ່ານຮູ້ສຶກສະບາຍໃຈ ທີ່ຈະເຮັດໃນສິ່ງດັ່ງກ່າວ, ທ່ານກໍ່ຄວນສະແດງຄວາມກັງວົນຂອງທ່ານກັບຜູ້ຈັດການຝ່າຍບຸກຄົນ ຫຼື ກັບທີມງານບຸກຄະລາກອນພາຍໃນຂອງທ່ານ.

**2.** ການສະແດງຄວາມຄິດເຫັນຕໍ່ກຸ່ມບໍລິສັດ
ຖ້າທ່ານຮູ້ສຶກບໍ່ສະບາຍໃຈ ທີ່ຈະສະແດງຄວາມກັງວົນກັບໝູ່ຮ່ວມງານ ຫຼື ຖ້າທ່ານໄດ້ສະແດງຄວາມກັງວົນພາຍໃນແລ້ວ ແລະ ເຊື່ອວ່າການຕອບກັບພາຍໃນນັ້ນບໍ່ພຽງພໍ, ພວກເຮົາກໍ່ຂໍສົ່ງເສີມໃຫ້ທ່ານສົ່ງລາຍງານຜ່ານລະບົບລາຍງານຄວາມລັບອັດຕະໂນ ມັດຂອງພວກເຮົາ. ລະບົບນີ້ປອດໄພ, ເຂົ້າຫາງ່າຍ ແລະ ໃຊ້ງ່າຍ ເຊິ່ງຈະຮັບປະກັນວ່າລາຍງານຂອງທ່ານຈະຖືກສົ່ງຫາບຸກຄົນທີ່ຖືກຕ້ອງໂດຍໄວ. ທ່ານສາມາດສົ່ງລາຍງານຂອງທ່ານໂດຍທີ່ບໍ່ຕ້ອງລະບຸຕົວຕົນ ຖ້າທ່ານຕ້ອງການ.

ທ່ານສາມາດເຂົ້າລະບົບຈາກຄອມພິວເຕີ ຫຼື ອຸປະກອນມືຖືຂອງທ່ານ ໂດຍເຂົ້າໄປທີ່ https://imperialbrands.whistleblowernetwork.net. ທ່ານຍັງສາມາດສະແກນລະຫັດ QR ທີ່ຢູ່ດ້ານລຸ່ມນີ້ ໂດຍ ນຳໃຊ້ກ້ອງຖ່າຍຮູບຂອງອຸປະກອນຂອງທ່ານ:

ເມື່ອຢູ່ໃນລະບົບແລ້ວ, ທ່ານຈະສາມາດເຮັດລາຍງານຢ່າງເປັນລາຍລັກອັກສອນ ຫຼື ບັນທຶກຂໍ້ຄວາມສຽງ (ປັດຈຸບັນແມ່ນຍັງບໍ່ ຮອງຮັບລະບົບ iOS) ແລະ ທ່ານຍັງສາມາດແນບຕິດເອກະສານ, ຮູບພາບ ຫຼື ວິດີໂອ ເພື່ອສະໜັບສະໜູນລາຍງານຂອງທ່ານ ຖ້າທ່ານຕ້ອງການ. ຖ້າທ່ານເລືອກທີ່ຈະຝາກຂໍ້ຄວາມສຽງ, ສຽງຂອງທ່ານກໍ່ຈະຖືກບິດບັງໃນຮູບແບບດິຈິຕອນ ເພື່ອປົກປ້ອງຂໍ້ມູນປະຈຳຕົວຂອງທ່ານ ຖ້າທ່ານຕ້ອງການທີ່ຈະບໍ່ເປີດເຜີຍຕົວເອງ.

ໃນບາງປະເທດ ທ່ານຍັງສາມາດໂທຫາສາຍດ່ວນພາຍໃນໂດຍທີ່ບໍ່ຕ້ອງເສຍຄ່າໂທ ແລະ ປະຕິບັດຕາມຄຳແນະນຳອັດຕະໂນມັດ ເພື່ອຝາກຂໍ້ຄວາມຂອງທ່ານ ຖ້າທ່ານຕ້ອງການ. ທ່ານສາມາດເຂົ້າຫາລາຍຊື່ບັນດາປະເທດຕ່າງໆ ແລະ ໝາຍເລກໂທລະສັບ ຢູ່ບ່ອນນີ້. ພຽງແຕ່ປ້ອນລະຫັດ 25492 ເມື່ອມີການແຈ້ງບອກ.

ບໍ່ວ່າທ່ານຈະເລືອກທາງເລືອກໃດກໍຕາມ,
ຈະມີການຂໍໃຫ້ທ່ານສ້າງກ່ອງໄປສະນີທີ່ປອດໄພເຊິ່ງຈະເປັນວິທີທາງທີ່ປອດໄພ ແລະ ມີປະສິດທິພາບ
ເພື່ອໃຫ້ພວກເຮົາສື່ສານກັບທ່ານຜ່ານລະບົບ ແລະ ເພື່ອຕອບກັບຫາທ່ານ.

**ການຮັບປະກັນຂອງພວກເຮົາທີ່ມີຕໍ່ທ່ານ**

ພວກເຮົາຈະປົດບັງຕົວຕົນຂອງທ່ານ ແລະ ຈະຮັກສາເລື່ອງທີ່ທ່ານກັງວົນໃຫ້ເປັນຄວາມລັບເທົ່າທີ່ຈະສາມາດເຮັດໄດ້.
ຢ່າງໃດກໍ ຕາມ, ອາດມີຄວາມຈຳເປັນຕ້ອງເປີດເຜີຍບາງຂໍ້ມູນເພື່ອດຳເນີນການສືບສວນຢ່າງຖືກຕ້ອງ.
ທ່ານສາມາດເລືອກທີ່ຈະສະແດງ ຄວາມກັງວົນຂອງທ່ານໂດຍບໍ່ເປີດເຜີຍຕົວຕົນ
ຖ້າຫາກກົດໝາຍຂອງປະເທດທີ່ທ່ານເຮັດວຽກຢູ່ອະນຸຍາດໃຫ້ເຮັດສິ່ງດັ່ງກ່າວ.

ພວກເຮົາຈະບໍ່ຍອມໃຫ້ມີການໂຕ້ຕອບບຸກຄົນທີ່ສະແດງຄວາມຄິດເຫັນ ຫຼື ຊ່ວຍໃນການສືບສວນ.

ເດືອນພະຈິກ 2020